ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ.....0451...../ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ..14..ມິຖຸນາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງສິນຄ້າຜ່ານແດນ

- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ຄຳສັ່ງ ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ໜັງສືສະເໜີຂອງກົມນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 1922/ກຂອ.ຊດ, ລົງວັນທີ 03 ມິຖຸນາ 2021.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງສິນຄ້າຜ່ານແດນ ສປປ ລາວ ໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແນໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ຜ່ານແດນຂອງສິນຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງສິນຄ້າຜ່ານແດນ**

ການຄຸ້ມຄອງສິນຄ້າຜ່ານແດນ ແມ່ນ ການຕິດຕາມ, ກວດກາ ແລະ ອອກອະນຸຍາດ ກ່ອນການນຳເອົາສິນຄ້າຈາກປະເທດໃດໜຶ່ງ ມາຜ່ານອານາເຂດພາສີ ຂອງ ສປປ ລາວ ໄປປະເທດທີສາມ.

ການຜ່ານແດນຂອງສິນຄ້າທີ່ນອນຢູ່ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຫຼື ສິນຄ້າຄຸ້ມຄອງ ແມ່ນຕ້ອງຂໍອະນຸຍາດກ່ອນການນຳສິນຄ້າຜ່ານແດນ. ສຳລັບ ການຜ່ານແດນຂອງສິນຄ້າທີ່ບໍ່ນອນຢູ່ລາຍການສິນຄ້າດັ່ງກ່າວ ແມ່ນໃຫ້ດຳເນີນການແຈ້ງເອກະສານຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໂດຍບໍ່ຕ້ອງຂໍອະນຸຍາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າຄຸ້ມຄອງ** ໝາຍເຖິງ ສິນຄ້າທີ່ນອນຢູ່ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ ທີ່ ກະຊວງ ອຸດສາຫະກຳ ແລະ ການຄ້າ ກຳນົດໃນແຕ່ລະໄລຍະ;

2. **ໃບອະນຸຍາດ** ໝາຍເຖິງ ເອກະສານຢັ້ງຢືນການອະນຸຍາດໃຫ້ສາມາດນຳສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

3. **ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ** ໝາຍເຖິງ ບັນດາຂະແໜງການ ທີ່ຄຸ້ມຄອງ ແລະ ອອກໃບອະນຸຍາດໃຫ້ນຳສິນຄ້າຄຸ້ມຄອງຜ່ານແດນ ສປປ ລາວ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບ ການນຳເອົາສິນຄ້າຄຸ້ມຄອງ ມາຜ່ານອານາເຂດພາສີ ຂອງ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດນຳສິນຄ້າຄຸ້ມຄອງຜ່ານແດນ

**ມາດຕາ 5 ເງື່ອນໄຂຂອງຜູ້ຂໍອະນຸຍາດນຳສິນຄ້າຄຸ້ມຄອງຜ່ານແດນ**

ຜູ້ຂໍອະນຸຍາດນຳສິນຄ້າຄຸ້ມຄອງຜ່ານແດນຂອງ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກສິນຄ້າຄຸ້ມຄອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

2. ບໍລິສັດທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ທີ່ມີຈຸດປະສົງນຳສິນຄ້າຄຸ້ມຄອງຜ່ານດິນແດນຂອງ ສປປ ລາວ ຕ້ອງມອບສິດໃຫ້ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກສິນຄ້າຄຸ້ມຄອງ ຢູ່ ສປປ ລາວ ເປັນຜູ້ດຳເນີນຂັ້ນຕອນທາງດ້ານເອກະສານແທນ.

**ມາດຕາ 6 ການຂໍອະນຸຍາດນຳສິນຄ້າຄຸ້ມຄອງຜ່ານແດນ**

ການຂໍອະນຸຍາດ ຕ້ອງສະເໜີລ່ວງໜ້າ ກ່ອນສິນຄ້າຈະມາເຖິງດ່ານພາສີຂາເຂົ້າຂອງ ສປປ ລາວ ຕາມໄລຍະເວລາທີ່ ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ.

ຜູ້ທີ່ມີເງື່ອນໄຂຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງປະກອບເອກະສານ ສະເໜີຕໍ່ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ທີ່ຄຸ້ມຄອງແຕ່ລະປະເພດສິນຄ້າ ເພື່ອພິຈາລະນາ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມ ທີ່ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;

2. ສໍາເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດ;

3. ສໍາເນົາໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່;

4. ເອກະສານຢັ້ງຢືນ ການສົ່ງອອກຈາກປະເທດຕົ້ນທາງ, ການນໍາເຂົ້າຈາກປະເທດປາຍທາງ ຫຼື ສັນຍາຊື້-ຂາຍ ລະຫວ່າງຄູ່ຄ້າປະເທດຕົ້ນທາງ ແລະ ປາຍທາງ;

5. ໃບມອບສິດຈາກເຈົ້າຂອງສິນຄ້າໃຫ້ຜູ້ດໍາເນີນການຂໍອະນຸຍາດຜ່ານແດນ ກໍລະນີມອບສິດໃຫ້ຜູ້ອື່ນມາແລ່ນເອກະສານແທນ.

**ມາດຕາ 7 ການພິຈາລະນາອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ຕ້ອງພິຈາລະນາອອກໃບອະນຸຍາດ ພາຍໃນ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ.

ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບທັນທີເພື່ອນໍາໄປປັບປຸງ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ສອງ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

**ມາດຕາ 8 ອາຍຸ ແລະ ການຕໍ່ອາຍຸ ໃບອະນຸຍາດ**

ໃບອະນຸຍາດ ມີອາຍຸການນໍາໃຊ້ ຫົກ ເດືອນ ແລະ ສາມາດຕໍ່ໄດ້ ໜຶ່ງ ຄັ້ງ ກໍານົດເວລາ ສາມ ເດືອນ.

ການສະເໜີຂໍຕໍ່ອາຍຸໃບອະນຸຍາດ ແມ່ນໃຫ້ສະເໜີຕໍ່ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ທີ່ອອກໃບອະນຸຍາດ ກ່ອນໃບອະນຸຍາດໝົດອາຍຸການນໍາໃຊ້ ຊາວ ວັນ ໂດຍປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມ ທີ່ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;

2. ໃບອະນຸຍາດ ສະບັບຕົ້ນ.

**ມາດຕາ 9 ການດັດແກ້ເນື້ອໃນໃບອະນຸຍາດ**

ການດັດແກ້ເນື້ອໃນໃບອະນຸຍາດແມ່ນການດັດແກ້ເນື້ອໃນ ກ່ຽວກັບ ລາຍການສິນຄ້າ, ຈໍານວນ, ມູນຄ່າ, ດ່ານ ແລະ ອື່ນໆ.

ຜູ້ທີ່ມີຈຸດປະສົງດັດແກ້ເນື້ອໃນໃບອະນຸຍາດ ຕ້ອງປະກອບເອກະສານສະເໜີຕໍ່ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ທີ່ອອກໃບອະນຸຍາດ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມທີ່ ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;

2. ໃບອະນຸຍາດສະບັບຕົ້ນ;

3. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ ກໍລະນີມີການປ່ຽນແປງຈາກສະບັບເດີມ.

**ມາດຕາ 10 ການອອກໃບອະນຸຍາດຄືນໃໝ່**

ກໍລະນີໃບອະນຸຍາດເສຍຫາຍ ຫຼື ຖືກທໍາລາຍ ແລະ ຕ້ອງການອອກໃບອະນຸຍາດຄືນໃໝ່ ແມ່ນໃຫ້ປະກອບເອກະສານ ສະເໜີຕໍ່ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ທີ່ອອກໃບອະນຸຍາດ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;

2. ໜັງສືຢັ້ງຢືນການເສຍຫາຍ ຫຼື ຖືກທຳລາຍ ທີ່ຢັ້ງຢືນໂດຍ ຜູ້ໄດ້ຮັບໃບອະນຸຍາດ.

**ມາດຕາ 11 ການເຄື່ອນຍ້າຍສິນຄ້າຄຸ້ມຄອງຜ່ານແດນ**

ການເຄື່ອນຍ້າຍຕ້ອງຜ່ານດ່ານສາກົນ ແລະ ຢູ່ພາຍໃຕ້ການຄວບຄຸມຂອງລັດຖະການພາສີ ແລະ ອົງການຄຸ້ມຄອງທີ່ກ່ຽວຂ້ອງ. ສິນຄ້າຜ່ານແດນຕ້ອງຢູ່ໃນສະພາບເດີມ, ຖືກຈັດສົ່ງຕາມເສັ້ນທາງ ແລະ ວັນເວລາທີ່ໄດ້ກຳນົດໄວ້ ໂດຍບໍ່ໃຫ້ຈຳໜ່າຍ, ນຳໃຊ້ ຫຼື ຕົກຄ້າງຢູ່ໃນ ສປປ ລາວ.

ໃນກໍລະນີຈຳເປັນຕ້ອງສັບປ່ຽນພາຫະນະ ຫຼື ຄ່ຽນຖ່າຍສິນຄ້າ ແມ່ນໃຫ້ປະຕິບັດຕາມກົດໝາຍພາສີ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ນຳສິນຄ້າຄຸ້ມຄອງຜ່ານແດນ

**ມາດຕາ 12 ສິດຂອງຜູ້ນຳສິນຄ້າຄຸ້ມຄອງຜ່ານແດນ**

ຜູ້ນຳສິນຄ້າຄຸ້ມຄອງຜ່ານແດນ ມີສິດ ດັ່ງນີ້:

1. ນຳເອົາສິນຄ້າຄຸ້ມຄອງທີ່ໄດ້ຮັບອະນຸຍາດມາຜ່ານແດນ ສປປ ລາວ;

2. ສະເໜີຂໍ ຕໍ່ອາຍຸ, ດັດແກ້ເນື້ອໃນ, ລຶບລ້າງ ຫຼື ອອກໃບອະນຸຍາດຄືນໃໝ່;

3. ໄດ້ຮັບການອຳນວຍຄວາມສະດວກ ຈາກອົງການຄຸ້ມຄອງຂອງລັດ;

4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ພັນທະຂອງຜູ້ນຳສິນຄ້າຄຸ້ມຄອງຜ່ານແດນ**

ຜູ້ນຳສິນຄ້າຄຸ້ມຄອງຜ່ານແດນ ມີພັນທະ ດັ່ງນີ້:

1. ປະຕິບັດການເສຍພາສີ, ອາກອນ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

2. ເກັບຮັກສາເອກະສານທຸກຄັ້ງທີ່ມີການດຳເນີນການນຳເອົາສິນຄ້າຄຸ້ມຄອງມາຜ່ານແດນ ຢ່າງໜ້ອຍ ສາມ ປີ ນັບແຕ່ ວັນທີແຈ້ງພາສີເປັນລາຍລະອຽດ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ;

3. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດການນຳເອົາສິນຄ້າຄຸ້ມຄອງມາຜ່ານແດນ ສປປ ລາວ ໃຫ້ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ທີ່ອອກໃບອະນຸຍາດທຸກໆ ສາມ ເດືອນ ຕາມແບບພິມທີ່ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;

4. ແຈ້ງໃຫ້ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ທີ່ອອກໃບອະນຸຍາດຊາບເປັນລາຍລັກອັກສອນ ກໍລະນີທີ່ບໍ່ມີການນຳໃຊ້ໃບອະນຸຍາດ;

5. ນຳເອົາສິນຄ້າຄຸ້ມຄອງມາຜ່ານແດນ ຖືກຕ້ອງຕາມເສັ້ນທາງ, ດ່ານເຂົ້າ-ອອກ, ເວລາ ແລະ ຈຳນວນຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;

6. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ພາກລັດ ໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດການນໍາເອົາສິນຄ້າຄຸ້ມຄອງມາຜ່ານແດນ;

7. ປະຕິບັດການຊໍາລະເງິນຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ໄດ້ກໍານົດ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າຜ່ານແດນ

### ມາດຕາ 14 ການຄຸ້ມຄອງສິນຄ້າຜ່ານແດນ

ການຄຸ້ມຄອງສິນຄ້າຜ່ານແດນ ແມ່ນ ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ເປັນຜູ້ຈັດຕັ້ງປະຕິບັດ ຊຶ່ງປະກອບມີ ສອງ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນບັນດາກະຊວງທີ່ກ່ຽວຂ້ອງ ທີ່ຄຸ້ມຄອງບັນດາສິນຄ້າຄຸ້ມຄອງຜ່ານແດນ ຕາມສິດ ແລະ ພາລະບົດບາດຂອງຕົນ;

2. ຂັ້ນແຂວງ ແມ່ນບັນດາພະແນກການ ປະຈໍາ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບມອບໝາຍໃຫ້ຄຸ້ມຄອງ ແລະ ອອກໃບອະນຸຍາດຜ່ານແດນສິນຄ້າຄຸ້ມຄອງ.

### ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ຂັ້ນສູນກາງ

ໃນການຄຸ້ມຄອງການນໍາເອົາສິນຄ້າຄຸ້ມຄອງຜ່ານແດນ ອົງການຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງສິນຄ້າຄຸ້ມຄອງຜ່ານແດນ ເພື່ອນໍາສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່, ແນະນໍາ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມຊາບ ຢ່າງທົ່ວເຖິງ;

3. ພິຈາລະນາອອກ, ຕໍ່ອາຍຸ, ດັດແກ້ເນື້ອໃນ ແລະ ລຶບລ້າງ ໃບອະນຸຍາດ;

4. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານການຄຸ້ມຄອງສິນຄ້າຜ່ານແດນ ໂດຍປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ;

5. ສະຫຼຸບ ແລະ ລາຍງານ ວຽກງານຄຸ້ມຄອງສິນຄ້າຜ່ານແດນ ໃຫ້ຂັ້ນເທິງຂອງຕົນ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ ຢ່າງເປັນປົກກະຕິ;

6. ເກັບຮັກສາສໍາເນົາເອກະສານໃບອະນຸຍາດຄົບຊຸດ ຢ່າງໜ້ອຍ ສາມ ປີ ຫຼື ຕາມການກໍານົດຂອງຂະແໜງການຄຸ້ມຄອງ;

7. ປະສານສົມທົບກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ໃນການສ້າງ ແລະ ປັບປຸງ ລາຍການສິນຄ້າຄຸ້ມຄອງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຂອງ ສປປ ລາວ, ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ຂັ້ນແຂວງ**

ໃນການຄຸ້ມຄອງການນຳເອົາສິນຄ້າຄຸ້ມຄອງມາຜ່ານແດນ ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ຂັ້ນແຂວງ ມີສິດ ແລະ ຫນ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດການຄຸ້ມຄອງການນຳເອົາສິນຄ້າຄຸ້ມຄອງມາຜ່ານແດນໃຫ້ສອດຄ່ອງກັບນະໂຍບາຍ ແລະ ນິຕິກຳທີ່ວາງອອກ ໃນແຕ່ລະໄລຍະ;
2. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານ ທີ່ຕິດພັນກັບວຽກງານການຄຸ້ມຄອງການນຳເອົາສິນຄ້າຄຸ້ມຄອງມາຜ່ານແດນ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຂັ້ນແຂວງ ແລະ ພາກທຸລະກິດຊາບ ຢ່າງທົ່ວເຖິງ;
3. ພິຈາລະນາອອກ, ຕໍ່ອາຍຸ, ດັດແກ້ເນື້ອໃນ ແລະ ລຶບລ້າງ ໃບອະນຸຍາດ ຕາມພາລະບົດບາດຂອງຕົນ;
4. ເກັບກຳ, ສັງລວມສະພາບ ແລະ ສະໜອງຂໍ້ມູນສະຖິຕິ ທີ່ຕິດພັນກັບການຄຸ້ມຄອງການນຳສິນຄ້າຄຸ້ມຄອງຜ່ານແດນ ເພື່ອລາຍງານຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
5. ເກັບຮັກສາສຳເນົາເອກະສານໃບອະນຸຍາດຄົບຊຸດຢ່າງໜ້ອຍ ສາມ ປີ ຫຼື ຕາມການກຳນົດຂອງຂະແໜງການຄຸ້ມຄອງ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຂອງ ສປປ ລາວ, ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍ ການເຄື່ອນຍ້າຍສິນຄ້າຜ່ານແດນ ສປປ ລາວ ສະບັບເລກທີ 1238/ອຄ.ກຂອ, ລົງວັນທີ 23 ມິຖຸນາ 2015.

ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ